**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 01 /ລບ
ນະຄອນຫຼວງວຽງຈັນ, ວັນທີ 04.01.2024

# ດຳລັດ
# ວ່າດ້ວຍປ່າປ້ອງກັນ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3353/ກປ, ລົງວັນທີ 17 ພຶດສະພາ 2023.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ ຫຼື ພວມເກີດຂຶ້ນ, ເຮັດໃຫ້ປ່າປ້ອງກັນມີຄວາມອຸດົມສົມບູນ, ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບການປ່ຽນແປງດິນຟ້າອາກາດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍຕິດພັນກັບການສົ່ງເສີມການທ່ອງທ່ຽວທຳມະຊາດ ປະກອບສ່ວນເຂົ້າ ໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ

**ມາດຕາ 2 ປ່າປ້ອງກັນ**

ປ່າປ້ອງກັນ ແມ່ນ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການຮັກສາ ແຫຼ່ງນໍ້າ, ແຄມນໍ້າ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທີ່ດິນປ່າປ້ອງກັນ** ໝາຍເຖິງ ທີ່ດິນປ່າໄມ້ ລວມທັງສາຍນໍ້າ, ຫ້ວຍ, ຮ່ອງ, ຄອງ, ບຶງ, ໜອງນໍ້າ, ທີ່ດິນບໍລິເວນນໍ້າ ແລະ ອື່ນໆ ທີ່ລັດໄດ້ກຳນົດໃຫ້ເປັນປ່າປ້ອງກັນ;

2. **ແຫຼ່ງນ້ຳ** ໝາຍເຖິງ ສະຖານທີ່ບ່ອນມີການເຕົ້າໂຮມ, ອາໄສ, ພັກຕົວ ຫຼື ເຄື່ອນໄຫຼແບບຖາວອນ ຫຼື ຊົ່ວຄາວຂອງນ້ຳ; ແຫຼ່ງນ້ຳເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີຢູ່ເທິງໜ້າດິນ, ໃຕ້ດິນ ແລະ ໃນອາກາດ;
3. **ອ່າງຮັບນ້ຳ** ໝາຍເຖິງ ຂອບເຂດເນື້ອທີ່ດິນ, ເນື້ອທີ່ນ້ຳ ແລະ ເນື້ອທີ່ປ່າໄມ້ທຸກຕອນ ຕັ້ງແຕ່ຍອດນ້ຳ ຈົນຮອດປາກນ້ຳ ບ່ອນທີ່ມີສັນປັນນ້ຳ ແລະ ເວລາທີ່ຝົນຕົກລົງມາໄຫຼໂຮມກັນເຂົ້າເປັນລະບົບແຫຼ່ງນ້ຳ ເຊັ່ນ ນ້ຳຂອງ, ນ້ຳອູ, ນ້ຳງື່ມ, ນ້ຳເທີນ, ນ້ຳກະດິງ, ເຊບັ້ງໄຟ, ເຊກອງ ແລະ ນ້ຳອື່ນໆ;
4. **ອ່າງເກັບນ້ຳ** ໝາຍເຖິງ ລະບົບເກັບກັກນ້ຳ ດ້ວຍການຂຸດສະ, ການຕັນນ້ຳຫ້ວຍ, ນ້ຳເຊ ເພື່ອໃຫ້ມີນ້ຳ ພຽງພໍ ແລະ ແຮໄວ້ ແນ່ໃສ່ຮັບປະກັນຄວາມຕ້ອງການດ້ານການດຳລົງຊີວິດ, ການຜະລິດກະສິກຳ, ການຄົງຕົວຂອງສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ອື່ນໆ;
5. **ປ່າຍອດນ້ຳ** ໝາຍເຖິງ ເນື້ອທີ່ປ່າປ້ອງກັນ ຊຶ່ງເປັນເຂດຕົ້ນກຳເນີດ ຂອງສາຍນ້ຳ;
6. **ປ່າແຄມນ້ຳ** ໝາຍເຖິງ ເນື້ອທີ່ປ່າປ້ອງກັນ ຊຶ່ງເປັນເຂດແຄມ ແມ່ນ້ຳ, ຫ້ວຍ, ຮ່ອງ, ໜອງ, ບຶງ, ເພື່ອ ປ້ອງກັນການສະລ້າງ, ການກັດເຊາະເຈື່ອນດິນແຄມນ້ຳ, ຫຼຸດຜ່ອນ ການໄຫຼບ່າຂອງນ້ຳ ແລະ ການ ເຊາະຕະກອນລົງໃສ່ແມ່ນ້ຳ ແລະ ອ່າງເກັບນ້ຳ;
7. **ປ່າແຄມທາງ** ໝາຍເຖິງ ເນື້ອທີ່ປ່າປ້ອງກັນ ຊຶ່ງກຳນົດໄວ້ ເພື່ອປ້ອງກັນການເຊາະເຈື່ອນຂອງດິນ, ຮັກ ສາລະບົບນິເວດວິທະຍາປ່າໄມ້ ຕາມແຄມທາງ ລວມທັງ ປ່າໄມ້ທີ່ມີຢູ່ໃນເຂດສະຫງວນທາງຫຼວງ;
8. **ສັນຍາປົກປັກຮັກສາປ່າໄມ້** ໝາຍເຖິງ ເອກະສານກຳນົດຂໍ້ຜູກພັນ ລະຫວ່າງ ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ແລະ ອົງການປົກຄອງບ້ານ ທີ່ມີພື້ນທີ່ຢູ່ໃນ ຫຼື ຕິດກັບປ່າປ້ອງກັນ ໂດຍການຢັ້ງຢືນຈາກອົງການປົກຄອງ ຂັ້ນເມືອງ;
9. **ລຳດັບມາດຕະການຫຼຸດຜ່ອນຜົນກະທົບ** ໝາຍເຖິງ ວິທີການຫຼຸດຜ່ອນຜົນກະທົບ ຕໍ່ຊີວະນານາພັນ ແລະ ການບໍລິການດ້ານລະບົບນິເວດ ທີ່ໄດ້ຮັບການຍອມຮັບຈາກສາກົນ ຊຶ່ງປະກອບດ້ວຍ ການຫຼີກລ່ຽງ, ຫຼຸດຜ່ອນ, ຟື້ນຟູ ແລະ ການທົດແທນຊີວະນານາພັນແບບຄົບຖ້ວນ ແນ່ໃສ່ທົດແທນຊີວະນານາພັນ ເທົ່າເດີມ ຫຼື ເພີ່ມຊີວະນານາພັນ;
10. **ການທົດແທນຊີວະນານາພັນແບບຄົບຖ້ວນ** ໝາຍເຖິງ ການດຳເນີນການ ເພື່ອທົດແທນຜົນກະທົບທາງລົບ ຕໍ່ຊີວະນານາພັນ ທີ່ຍັງເຫຼືອຄ້າງ ແລະ ສືບຕໍ່ມີ ຈາກໂຄງການລົງທຶນ ຫຼັງຈາກທີ່ໄດ້ດຳເນີນມາດຕະ ການ ຫຼີກລ່ຽງ, ຫຼຸດຜ່ອນ ແລະ ຟື້ນຟູ ຢ່າງເໝາະສົມ;
11. **ການທົດແທນຊີວະນານາພັນເທົ່າເດີມ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ ລຳດັບມາດ ຕະການຫຼຸດຜ່ອນຜົນກະທົບ ຈາກໂຄງການລົງທຶນ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບ ທາງລົບຕໍ່ຊີວະນານາພັນ ຖືກດຸ່ນດ່ຽງ ໂດຍຜົນກະທົບທາງບວກຕໍ່ຊີວະນານາພັນ ຢ່າງເໝາະສົມ;
12. **ການເພີ່ມຊີວະນານາພັນ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ ລຳດັບມາດຕະການຫຼຸດຜ່ອນ ຜົນກະທົບ ຈາກໂຄງການພັດທະນາ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບທາງບວກຕໍ່ຊີວະ ນານາພັນ ມີລະດັບລື່ນຜົນກະທົບທາງລົບ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານປ່າປ້ອງກັນ**

ວຽກງານປ່າປ້ອງກັນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຮັບປະກັນ ການຄຸ້ມຄອງປ່າປ້ອງກັນ ເປັນລະບົບ ແລະ ເປັນເອກະພາບ ໃນທົ່ວປະເທດ;
3. ຮັບປະກັນຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;

4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
5. ຮັບປະກັນຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນ ຕາມກົດໝາຍ.

# ພາກທີ II
# ລະດັບ ແລະ ການກຳນົດປ່າປ້ອງກັນ
## ໝວດທີ 1
## ລະດັບປ່າປ້ອງກັນ

**ມາດຕາ 5 ລະດັບປ່າປ້ອງກັນ**

ປ່າປ້ອງກັນ ຈັດເປັນ ສີ່ ລະດັບ ດັ່ງນີ້:

1. ປ່າປ້ອງກັນແຫ່ງຊາດ;
2. ປ່າປ້ອງກັນ ລະດັບແຂວງ;
3. ປ່າປ້ອງກັນ ລະດັບເມືອງ;
4. ປ່າປ້ອງກັນ ລະດັບບ້ານ.

**ມາດຕາ 6 ປ່າປ້ອງກັນແຫ່ງຊາດ**

ປ່າປ້ອງກັນແຫ່ງຊາດ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ຫຼາຍກວ່າ ສາມສິບພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະສາດໃນລະດັບຊາດ, ພາກພື້ນ ຫຼື ສາກົນ.

**ມາດຕາ 7 ປ່າປ້ອງກັນ ລະດັບແຂວງ**

ປ່າປ້ອງກັນ ລະດັບແຂວງ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ສອງພັນ ຫາ ສາມສິບພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະສາດໃນລະດັບແຂວງ.

**ມາດຕາ 8 ປ່າປ້ອງກັນ ລະດັບເມືອງ**

ປ່າປ້ອງກັນ ລະດັບເມືອງ ແມ່ນປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ໜຶ່ງຮ້ອຍ ຫາ ຕ່ຳກວ່າ ສອງພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະສາດໃນລະດັບເມືອງ.

**ມາດຕາ 9 ປ່າປ້ອງກັນ ລະດັບບ້ານ**

ປ່າປ້ອງກັນ ລະດັບບ້ານ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ສູນຈຸດຫ້າ ຫາ ຕ່ຳກວ່າ ໜຶ່ງຮ້ອຍ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະສາດໃນລະດັບບ້ານ.

# ໝວດທີ 2
# ການກຳນົດປ່າປ້ອງກັນ

**ມາດຕາ 10 ການກຳນົດປ່າປ້ອງກັນ**

ການກຳນົດປ່າປ້ອງກັນ ແມ່ນ ການກຳນົດເອົາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນປ່າປ້ອງກັນ ລວມທັງ ການຂຶ້ນທະບຽນ ແລະ ການປຽນແປງເນື້ອທີ່ ປ່າປ້ອງກັນ.

ການກຳນົດປ່າປ້ອງກັນ ໃຫ້ປະຕິບັດ ດັ່ງນີ້:

1. ດຳເນີນການສຳຫຼວດ ເກັບກຳຂໍ້ມູນກ່ຽວກັບ ຄຸນລັກສະນະທາງດ້ານ ພູມີສາດ, ປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ, ສະພາບປ່າໄມ້, ແຫຼ່ງນ້ຳ, ອ່າງຮັບນ້ຳ, ອ່າງເກັບນ້ຳ ແລະ ເສດຖະກິດ-ສັງຄົມຂອງບ້ານທີ່ມີພື້ນທີ່ຢູ່ໃນ ແລະ ອ້ອມເຂດທີ່ຈະກຳນົດເປັນເຂດປ່າປ້ອງກັນ;
2. ສ້າງແຜນທີ່ສະແດງຂອບເຂດທີ່ຕັ້ງ ແລະ ຂໍ້ມູນຈາກການສຳຫຼວດ ເປັນຕົ້ນ ຂໍ້ມູນ ສະພາບປ່າໄມ້, ແຫຼ່ງນ້ຳ, ອ່າງຮັບນ້ຳ ແລະ ອ່າງເກັບນ້ຳ;
3. ເປີດກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ເພື່ອຄວາມເປັນເອກະພາບ;
4. ສະເໜີອົງການທີ່ມີສິດອຳນາດ ພິຈາລະນາຮັບຮອງ;
5. ສະເໜີຂຶ້ນທະບຽນທີ່ດິນປ່າປ້ອງກັນ.

**ມາດຕາ 11 ການຮັບຮອງປ່າປ້ອງກັນ**

ລັດຖະບານ ເປັນຜູ້ຮັບຮອງ ປ່າປ້ອງກັນແຫ່ງຊາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະພາບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງ ປ່າປ້ອງກັນ ລະດັບແຂວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂດຍເປັນເອກະພາບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນແຂວງທີ່ກ່ຽວຂ້ອງ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຮັບຮອງ ປ່າປ້ອງກັນ ລະດັບເມືອງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ໂດຍເປັນເອກະພາບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ອົງການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ.

ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຮັບຮອງ ປ່າປ້ອງກັນ ລະດັບບ້ານ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ໂດຍເປັນເອກະພາບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ.

**ມາດຕາ 12 ການຂຶ້ນທະບຽນທີ່ດິນປ່າປ້ອງກັນ**

ການຂຶ້ນທະບຽນທີ່ດິນປ່າປ້ອງກັນ ແມ່ນ ການຂຶ້ນທະບຽນອອກໃບຕາດິນລັດ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອສະດວກໃນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ.

ປ່າປ້ອງກັນທີ່ຖືກຮັບຮອງ ຕາມມາດຕາ 11 ຂອງດຳລັດສະບັບນີ້ ໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ສະເໜີຂຶ້ນທະບຽນອອກໃບຕາດິນ ປ່າປ້ອງກັນ ນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 13 ການປ່ຽນແປງເນື້ອທີ່ປ່າປ້ອງກັນ**

ການປ່ຽນແປງເນື້ອທີ່ປ່າປ້ອງກັນ ແມ່ນ ການເພີ່ມ ຫຼື ຫຼຸດເນື້ອທີ່ປ່າປ້ອງກັນ. ການເພີ່ມ ຫຼື ຫຼຸດເນື້ອທີ່ປ່າປ້ອງກັນໃດໜຶ່ງ ໃຫ້ດຳເນີນການກຳນົດ ແລະ ຮັບຮອງປ່າປ້ອງກັນນັ້ນຄືນໃໝ່ ແລະ ປະຕິບັດຕາມ ທີ່ກຳນົດໄວ້ໃນມາດຕາ 10 ແລະ ມາດຕາ 11 ຂອງດຳລັດສະບັບນີ້.

ການເພີ່ມເນື້ອທີ່ປ່າປ້ອງກັນໃດໜຶ່ງ ຫາກມີຜົນຕໍ່ການປ່ຽນແປງລະດັບປ່າປ້ອງກັນ ໃຫ້ດຳເນີນການຫັນປ່ຽນປ່າປ້ອງກັນນັ້ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 43 ຂອງດຳລັດສະບັບນີ້.

ສຳລັບການຫຼຸດເນື້ອທີ່ປ່າປ້ອງກັນ ຍ້ອນການຫັນປ່ຽນທີ່ດິນປ່າປ້ອງກັນ ເປັນທີ່ດິນປະເພດອື່ນນັ້ນ ຕ້ອງໄດ້ຮັບການຕົກລົງຫັນປ່ຽນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 45 ຂອງດຳລັດສະບັບນີ້.

# ພາກທີ III
# ກິດຈະການປ່າປ້ອງກັນ
## ໝວດທີ 1
## ການຄຸ້ມຄອງປ່າປ້ອງກັນ

**ມາດຕາ 14 ການຄຸ້ມຄອງປ່າປ້ອງກັນ**

ໃນການຄຸ້ມຄອງປ່າປ້ອງກັນ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສຳຫຼວດພູມີທັດປ່າປ້ອງກັນ;
2. ການສ້າງ ແລະ ຮັບຮອງ ແຜນຈັດສັນປ່າປ້ອງກັນ;
3. ການຕິດປ້າຍ ແລະ ປັກຫຼັກໝາຍ ເຂດປ່າປ້ອງກັນ;
4. ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ.

**ມາດຕາ 15 ການສຳຫຼວດພູມີທັດປ່າປ້ອງກັນ**

ການສຳຫຼວດພູມີທັດປ່າປ້ອງກັນ ແມ່ນ ການເກັບກຳ ແລະ ວິເຄາະຂໍ້ມູນ ກ່ຽວກັບສະພາບປ່າໄມ້, ຊີວະນານາພັນ, ລະບົບນິເວດ, ເນື້ອທີ່ປົກຫຸ້ມປ່າໄມ້, ມວນສານທາດອາຍກາກໂບນິກ ($CO_2$), ຊະນິດພັນສັດນ້ຳ, ສັດປ່າ, ພືດປ່າ ແລະ ເຄື່ອງປ່າຂອງດົງ, ແຫຼ່ງນ້ຳ, ປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງ, ການນຳໃຊ້ທີ່ດິນ ແລະ ເສດຖະກິດ-ສັງຄົມຂອງບ້ານທີ່ມີພື້ນທີ່ຢູ່ໃນ ຫຼື ຕິດກັບປ່າປ້ອງກັນ, ຄວາມສຳຄັນທາງປະຫວັດສາດ ແລະ ວັດທະນະທຳ ຂອງພູມີທັດປ່າປ້ອງກັນ, ການກຳນົດເຂດແດນ ແລະ ການແບ່ງເຂດຄຸ້ມຄອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການ ສຳຫຼວດປ່າປ້ອງກັນ ໂດຍສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 16 ການສ້າງ ແລະ ຮັບຮອງແຜນຈັດສັນປ່າປ້ອງກັນ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນຜູ້ຄົ້ນຄວ້າ ສ້າງແຜນຈັດສັນປ່າປ້ອງກັນບົນພື້ນຖານ ຂໍ້ມູນສຳຫຼວດ ຕາມທີ່ໄດ້ກຳນົດໃນ ມາດຕາ 15 ຂອງດຳລັດສະບັບນີ້ ໂດຍມີການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ. ການສ້າງແຜນຈັດສັນປ່າປ້ອງກັນ ຕ້ອງສອດຄ່ອງກັບຫຼັກການຄຸ້ມຄອງປ່າປ້ອງກັນ, ແຜນພັດທະນາຂອງຂະແໜງການ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ກຳນົດລະອຽດມາດຕະການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມກົດໝາຍ ແລະ ລະບຽບ.

ອົງການທີ່ມີສິດຮັບຮອງແຜນຈັດສັນປ່າປ້ອງກັນ ມີດັ່ງນີ້:

1. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງແຜນຈັດສັນ ປ່າປ້ອງກັນແຫ່ງຊາດ;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ຮັບຮອງແຜນຈັດສັນປ່າປ້ອງກັນ ລະດັບແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ຮັບຮອງແຜນຈັດສັນປ່າປ້ອງກັນ ລະດັບເມືອງ ແລະ ລະດັບບ້ານ.

**ມາດຕາ 17 ການຕິດປ້າຍ ແລະ ປັກຫຼັກໝາຍ ປ່າປ້ອງກັນ**

ການຕິດປ້າຍ ແລະ ປັກຫຼັກໝາຍປ່າປ້ອງກັນ ແຕ່ລະ ແຫ່ງ ແລະ ລະດັບ ແມ່ນ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ ຮັບຮູ້ຂອບເຂດປ່າປ້ອງກັນ, ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້, ເຂດປົກປັກຮັກສາແຫຼ່ງນ້ຳ ແລະ ຈຸດສຳຄັນອື່ນ ໃນການປົກປັກຮັກສາ ເພື່ອໃຫ້ທົ່ວສັງຄົມ ຮັບຮູ້ ແລະ ເປັນເຈົ້າການ ປ້ອງກັນ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າປ້ອງກັນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການຕິດປ້າຍ ແລະ ປັກຫຼັກໝາຍ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

**ມາດຕາ 18 ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ**

ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ແມ່ນ ການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ທີ່ຕັ້ງຢູ່ໃນ ແລະ ຕິດກັບ ປ່າປ້ອງກັນ ເພື່ອໃຫ້ບ້ານ ເປັນເຈົ້າການ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າປ້ອງກັນ ແນໃສ່ເຮັດໃຫ້ປ່າປ້ອງກັນໃນເຂດຄຸ້ມຄອງຂອງບ້ານ ມີຄວາມອຸດົມສົມບູນ ແລະ ກາຍເປັນບ້ານພັດທະນາປ່າໄມ້.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ປະສານສົມທົບກັບອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລະ ມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ ສ້າງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ໂດຍໃຫ້ສອດຄ່ອງກັບແຜນຈັດສັນປ່າປ້ອງກັນ.

ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ໃຫ້ປະຕິບັດ ດັ່ງນີ້:

1. ທົບທວນ ແລະ ກຳນົດ ປະເພດການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດປົກຄອງຂອງບ້ານ;
2. ກຳນົດຂອບເຂດ ແລະ ປັກຫຼັກໝາຍ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຂັ້ນບ້ານປົກປັກຮັກສາ ແລະ ພັດທະນາ ບົນພື້ນຖານການມີສ່ວນຮ່ວມ ຂອງອົງການປົກຄອງບ້ານ ແລະ ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ;
3. ສ້າງແຜນ ແລະ ກຳນົດມາດຕະການຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ແບບມີສ່ວນຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ;
4. ສ້າງຄວາມເຂັ້ມແຂງໃຫ້ບ້ານ ເປັນເຈົ້າການ ຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ, ຕ້ານ ຫຼື ສະກັດກັ້ນໄຟປ່າ ແລະ ການບຸກລຸກປ່າປ້ອງກັນ.

## ໝວດທີ 2
## ການປົກປັກຮັກສາປ່າປ້ອງກັນ

**ມາດຕາ 19 ການປົກປັກຮັກສາປ່າປ້ອງກັນ**

ການປົກປັກຮັກສາປ່າປ້ອງກັນ ນອກຈາກດໍາເນີນຕາມກິດຈະການ ທີ່ໄດ້ກໍານົດໄວ້ໃນ ມາດຕາ 46 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການປົກປັກຮັກສາເຂດຫວງຫ້າມເດັດຂາດ;
2. ການປົກປັກຮັກສາເຂດຄຸ້ມຄອງການນໍາໃຊ້;
3. ການສະກັດກັ້ນ ແລະ ຕ້ານ ການບຸກລຸກ ແລະ ທໍາລາຍປ່າປ້ອງກັນ;
4. ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ປ່າ;
5. ການກັນ ແລະ ຕ້ານ ພະຍາດໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ;
6. ການປົກປັກຮັກສາ ຊີວະນານາພັນ;
7. ການປູກຈິດສໍານຶກ;
8. ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ.

**ມາດຕາ 20 ການປົກປັກຮັກສາເຂດຫວງຫ້າມເດັດຂາດ**

ເຂດຫວງຫ້າມເດັດຂາດ ແມ່ນ ເຂດປ່າປ້ອງກັນ ທີ່ມີຄວາມສໍາຄັນຕໍ່ການປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ເຂດຕົ້ນກໍາເນີດຂອງສາຍນໍ້າ ຫຼື ປາຍຍອດນໍ້າ, ປ່າແຄມນໍ້າ, ແຫຼ່ງນໍ້າ, ອ່າງຮັບນໍ້າ, ອ່າງເກັບນໍ້າ, ປ່າແຄມທາງ, ປ້ອງກັນໄພທໍາມະຊາດ ຊຶ່ງບໍ່ອະນຸຍາດໃຫ້ດໍາເນີນທຸກກິດຈະການ, ຍົກເວັ້ນກິດຈະການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າປ້ອງກັນ ເປັນຕົ້ນ ການກວດກາລາດຕະເວນ, ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແລະ ການທ່ອງທ່ຽວແບບອະນຸລັກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ການປົກປັກຮັກສາເຂດຫວງຫ້າມເດັດຂາດ ໃຫ້ປະຕິບັດ ດັ່ງນີ້:

1. ກໍານົດຂອບເຂດ, ຕິດປ້າຍ ແລະ ປັກຫຼັກໝາຍ ຈຸດທີ່ຫຼໍ່ແຫຼມ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຮັບຮູ້;
2. ສ້າງຄວາມເຂັ້ມແຂງໃຫ້ອົງການຄຸ້ມຄອງ ແລະ ກວດກາວຽກງານປ່າປ້ອງກັນ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃຫ້ເປັນເຈົ້າການຕິດຕາມ, ສະກັດກັ້ນ ແລະ ຕ້ານ ການບຸກລຸກປ່າປ້ອງກັນ ເຊັ່ນ ການລັກລອບຕັດໄມ້, ຈູດປ່າ, ລ່າສັດແບບຜິດກົດໝາຍ ແລະ ການກະທໍາອື່ນທີ່ເປັນການທໍາລາຍຊັບພະຍາກອນປ່າໄມ້;
3. ສອດຄ່ອງກັບ ແຜນຈັດສັນ ແລະ ລະບຽບການຄຸ້ມຄອງປ່າປ້ອງກັນ.

**ມາດຕາ 21 ການປົກປັກຮັກສາເຂດຄຸ້ມຄອງການນໍາໃຊ້**

ເຂດຄຸ້ມຄອງການນໍາໃຊ້ ແມ່ນ ເຂດປ່າປ້ອງກັນ ຊຶ່ງລັດຈັດສັນໃຫ້ບ້ານ ທີ່ມີພື້ນທີ່ຢູ່ໃນ ແລະ ຕິດກັບປ່າປ້ອງກັນ ເພື່ອຄຸ້ມຄອງ, ປົກປັກຮັກສາ, ນໍາໃຊ້ ປ່າໄມ້ ແລະ ຊີວະນານາພັນ ແບບຍືນຍົງ ໂດຍໄດ້ຮັບຜົນປະໂຫຍດຕອບແທນທີ່ເໝາະສົມ.

ການປົກປັກຮັກສາເຂດຄຸ້ມຄອງການນໍາໃຊ້ ໃຫ້ປະຕິບັດ ດັ່ງນີ້:

1. ຕິດປ້າຍ ແລະ ປັກຫຼັກໝາຍ ຈຸດທີ່ຫຼໍ່ແຫຼມ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮັບຮູ້;
2. ຈັດສັນປ່າປ້ອງກັນ ໃຫ້ປະຊາຊົນ ເກັບກູ້ເຄື່ອງປ່າຂອງດົງ, ຜະລິດກະສິກໍາ, ປູກໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເປັນມິດກັບສິ່ງແວດລ້ອມ ເພື່ອສ້າງເສດຖະກິດຄອບຄົວ;

3. ກຳນົດເຂດປ່າຊົມໃຊ້ຂອງບ້ານ ທີ່ສາມາດນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດຂອງບ້ານ ແລະ ເພື່ອຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້;
4. ບໍ່ອະນຸຍາດໃຫ້ຕັດໄມ້ຈາກປ່າທຳມະຊາດ ເພື່ອດຳເນີນທຸລະກິດ;
5. ສອດຄ່ອງກັບແຜນຈັດສັນ ແລະ ລະບຽບການຄຸ້ມຄອງປ່າປ້ອງກັນ.
6.

**ມາດຕາ 22 ການສະກັດກັ້ນ ແລະ ຕ້ານການບຸກລຸກ ແລະ ທຳລາຍປ່າປ້ອງກັນ**

ການສະກັດກັ້ນ ແລະ ຕ້ານການບຸກລຸກ ແລະ ທຳລາຍປ່າປ້ອງກັນ ແມ່ນ ການເຄື່ອນໄຫວ ກວດກາ ລາດຕະເວນ, ສະກັດກັ້ນ ແລະ ຕ້ານ ການເຊື່ອມໂຊມຂອງປ່າໄມ້, ການບຸກລຸກ ແລະ ທຳລາຍ ປ່າໄມ້, ສັດນ້ຳ, ສັດປ່າ ແລະ ການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບ ກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າປ້ອງກັນ ໂດຍການຕັ້ງຈຸດກວດກາ ຕາມຈຸດຫຼໍ່ແຫຼມ ຫຼື ເສັ້ນທາງ ເຂົ້າ ອອກ, ຕັ້ງປ້ອມຍາມປ່າ, ສ້າງແຜນທີ່ລາດຕະເວນ ໃນເຂດປ່າປ້ອງກັນ ຕາມເຕັກນິກວິຊາການ.

**ມາດຕາ 23 ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ**

ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ແມ່ນ ການປ້ອງກັນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ບໍ່ໃຫ້ຖືກທຳລາຍດ້ວຍອັກຄີໄພ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງແຜນການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ, ວາງມາດຕະການປ້ອງກັນໄຟໄໝ້ປ່າ ໂດຍການສ້າງໃຫ້ມີ ກຸ່ມປ້ອງກັນ, ປ້ອມຍາມປ່າ, ເຝົ້າລະວັງ ແລະ ສ້າງແລວປ້ອງກັນໄຟໄໝ້ປ່າ ຕາມຈຸດທີ່ມີຄວາມສ່ຽງ ລວມທັງລະດົມ ພາຫະນະ, ວັດຖຸປະກອນ, ແຮງງານ ແລະ ງົບປະມານ ຈາກທຸກພາກສ່ວນເຂົ້າໃນການມອດໄຟປ່າ.

**ມາດຕາ 24 ການກັນ ແລະ ຕ້ານ ພະຍາດໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ.**

ການກັນ ແລະ ຕ້ານ ພະຍາດໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ແມ່ນ ການເຝົ້າລະວັງ, ຕິດຕາມການ ເກີດ, ລະບາດ ຂອງ ພະຍາດໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ລວມທັງຊະນິດພັນຕ່າງຖິ່ນຮຸກຮານ ເພື່ອປ້ອງກັນ ແລະ ແກ້ໄຂ ໃຫ້ມີປະສິດທິພາບ ແລະ ທັນເວລາ.

ການກັນ ແລະ ຕ້ານ ພະຍາດໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ໃຫ້ປະຕິບັດ ດັ່ງນີ້:

1. ເຝົ້າລະວັງ, ສຶກສາຂໍ້ມູນການເກີດ ແລະ ການລະບາດຂອງເຊື້ອພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ;
2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ໃນເຂດປ່າຂອງຕົນ;
3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;
4. ສ້າງສູນຄົ້ນຄວ້າການກັນ ແລະ ຕ້ານພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ, ອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນຳໃຊ້ແນວພັນໄມ້, ພັນສັດປ່າ ແລະ ພັນພືດ ທີ່ປອດພະຍາດ;
5. ບໍ່ອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍພັນໄມ້, ພັນສັດປ່າ ແລະ ພັນພືດ ທີ່ມີເຊື້ອພະຍາດ ຢ່າງເດັດຂາດ;
6. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

**ມາດຕາ 25 ການປົກປັກຮັກສາຊີວະນານາພັນ**

ການປົກປັກຮັກສາຊີວະນານາພັນ ແມ່ນ ການປົກປັກຮັກສາຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນປ່າປ້ອງກັນ ບໍ່ໃຫ້ຖືກທຳລາຍ ແລະ ໃຫ້ມີຄວາມອຸດົມສົມບູນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າປ້ອງກັນ ເພື່ອປົກປັກຮັກສາຊີວະນານາພັນ ເປັນຕົ້ນ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ ປະເພດຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ດ້ວຍການສຳຫຼວດ, ກຳນົດເຂດແຫຼ່ງພັນ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ ພ້ອມທັງກຳນົດແຜນການອະນຸລັກ, ປົກປັກຮັກສາ ແລະ ຟື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 26 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານ ສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆ ກ່ຽວກັບການປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ສິ່ງແວດລ້ອມ, ຊີວະນານາພັນ, ສັດນ້ຳ ແລະ ສັດປ່າ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າປ້ອງກັນ ແບບຍືນຍົງ.

**ມາດຕາ 27 ການຄຸ້ມຄອງ ແລະ ການຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ຫຼື ຕິດກັບເຂດໂຄງການ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຄງການລົງທຶນຕ່າງໆ, ຮັບປະກັນການນຳໃຊ້ປ່າປ້ອງກັນແບບຍືນຍົງ, ການແບ່ງປັນຜົນປະໂຫຍດຢ່າງເປັນທຳ, ການປະເມີນ ແລະ ຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການທົດແທນຄ່າເສຍຫາຍ.

ໃນໄລຍະກະກຽມໂຄງການ, ຖ້າຜົນຂອງການປະເມີນຄວາມເປັນໄປໄດ້ ບໍ່ສາມາດທົດແທນຊີວະນານາພັນເທົ່າເດີມແລ້ວ ໂຄງການດັ່ງກ່າວ ກໍຈະບໍ່ໄດ້ຮັບການອະນຸມັດ.

## ໝວດທີ 3
## ການພັດທະນາປ່າປ້ອງກັນ

**ມາດຕາ 28 ການພັດທະນາປ່າປ້ອງກັນ**

ການພັດທະນາປ່າປ້ອງກັນ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ພາກທີ IV ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການຟື້ນຟູລະບົບນິເວດປ່າໄມ້;
2. ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ;
3. ການພັດທະນາຊີວິດການເປັນຢູ່;
4. ການສ້າງບ້ານພັດທະນາປ່າໄມ້;

5. ການທ່ອງທ່ຽວແບບອະນຸລັກ;
6. ການສຶກສາຄົ້ນຄວ້າ;
7. ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ.

**ມາດຕາ 29 ການຟື້ນຟູລະບົບນິເວດປ່າໄມ້**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງລະບົບການຟື້ນຟູລະບົບນິເວດປ່າໄມ້, ກຳນົດ ແລະ ການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້ ທີ່ຖືກຜົນກະທົບຈາກໂຄງການລົງທຶນ ເປັນຕົ້ນ ການຟື້ນຟູປ່າ, ການຟື້ນຟູຖິ່ນທີ່ຢູ່ອາໄສຂອງສັດປ່າ ທີ່ໃກ້ຈະສູນພັນ, ການເຄື່ອນຍ້າຍ ຫຼື ປ່ອຍສັດປ່າ ທີ່ໄດ້ຮັບຜົນກະທົບ ຈາກໄພທຳມະຊາດ ແລະ ໂຄງການຕ່າງໆ ຄືນສູ່ທຳມະຊາດ ຕາມລະບຽບການ ແລະ ປະຕິບັດລຳດັບມາດຕະ ການຫຼຸດຜ່ອນຜົນກະທົບຕໍ່ຊີວະນານາພັນ.

**ມາດຕາ 30 ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ**

ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດເຂດຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ ຢູ່ໃນປ່າປ້ອງກັນ;
2. ກຳນົດຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ແທດເໝາະກັບລະບົບນິເວດ ຂອງພື້ນທີ່ປ່າດັ່ງກ່າວ;
3. ສ້າງແຜນການ ຫຼື ໂຄງການຟື້ນຟູປ່າໄມ້ ຕິດພັນກັບກິດຈະກຳສົ່ງເສີມການສ້າງລາຍຮັບ ໃຫ້ແກ່ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າປ້ອງກັນ;
4. ຂຶ້ນທະບຽນເປັນປ່າປູກ ແລະ ຟື້ນຟູ ຕາມລະບຽບການ;
5. ກຳນົດລະບຽບການນຳໃຊ້ ແລະ ຜົນປະໂຫຍດຂອງຜູ້ປູກ ຫຼື ຟື້ນຟູໃຫ້ຈະແຈ້ງ ເຊັ່ນ ການນຳໃຊ້ເຄື່ອງປ່າຂອງດົງທີ່ປູກ ຫຼື ຟື້ນຟູ, ບໍ່ອະນຸຍາດໃຫ້ຂຸດຄົ້ນ ແລະ ນຳໃຊ້ໄມ້ ເພື່ອເປົ້າໝາຍທາງການຄ້າ, ຜົນປະໂຫຍດຈາກການຊື້ ຂາຍສິນເຊື່ອກາກບອນປ່າໄມ້ ຫຼື ຜົນປະໂຫຍດອື່ນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບການນຳໃຊ້ ແລະ ຜົນປະໂຫຍດຂອງຜູ້ປູກ ຫຼື ຟື້ນຟູ.

**ມາດຕາ 31 ການພັດທະນາຊີວິດການເປັນຢູ່**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້ ແລະ ສົ່ງເສີມ ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າປ້ອງກັນ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ຢຸດເຊົາການຖາງປ່າເຮັດໄຮ່ ເພື່ອຫັນມາເຮັດອາຊີບຄົງທີ່ດ້ວຍການຈັດສັນດິນ ທີ່ຢູ່ອາໄສ ແລະ ເຂດທຳການຜະລິດແບບຄົງທີ່, ຊຸກຍູ້ ແລະ ສົ່ງເສີມ ການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມີຮູບແບບຕ່າງໆ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ ການປູກພືດກະສິກຳ, ລ້ຽງສັດ, ປະມົງ, ປູກຕົ້ນໄມ້, ເຄື່ອງປ່າຂອງດົງ, ຫັດຖະກຳ ແລະ ການບໍລິການອື່ນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນເຈົ້າການສ້າງ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດແຜນພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນຈັດສັນປ່າປ້ອງກັນ ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນໃນແຕ່ລະໄລຍະ.

**ມາດຕາ 32 ການສ້າງບ້ານພັດທະນາປ່າໄມ້**

ການສ້າງບ້ານພັດທະນາປ່າໄມ້ ແມ່ນ ການສ້າງໃຫ້ບ້ານມີຄວາມເຂັ້ມແຂງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງດໍາລັດສະບັບນີ້.

ບ້ານພັດທະນາປ່າໄມ້ ມີເງື່ອນໄຂ ດັ່ງນີ້:

1. ປະຊາຊົນພາຍໃນບ້ານ ມີສະຕິເຄົາລົບປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້;
2. ມີແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ທີ່ໄດ້ຜ່ານການຮັບຮອງຈາກຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ;
3. ມີສັນຍາປົກປັກຮັກສາປ່າໄມ້;
4. ມີລະບົບການຜະລິດກະສິກໍາ ແລະ ປ່າໄມ້ ແບບປະສົມປະສານ ທີ່ຍືນຍົງ;
5. ເປັນບ້ານທີ່ມີການປູກ ແລະ ຂະຫຍາຍປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ແລະ ເພີ່ມຄວາມປົກຫຸ້ມ ຂອງປ່າໄມ້.

**ມາດຕາ 33 ການທ່ອງທ່ຽວແບບອະນຸລັກ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດໍາເນີນການສໍາຫຼວດ, ວາງແຜນຈັດສັນ, ຄຸ້ມຄອງ ແລະ ພັດທະນາການທ່ອງທ່ຽວທໍາມະຊາດ ພ້ອມທັງດໍາເນີນການຕິດຕາມ ແລະ ກວດກາ ກິດຈະການທ່ອງທ່ຽວທໍາມະຊາດ ໃນເຂດປ່າປ້ອງກັນ ເພື່ອປະເມີນຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 34 ການສຶກສາຄົ້ນຄວ້າ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນການສຶກສາຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ເຊັ່ນ ແມງໄມ້, ພັນ ສັດນໍ້າ, ສັດປ່າ ແລະ ພັນພືດ ທີ່ໃກ້ຈະສູນພັນ, ທໍລະນີສາດ, ຮ່ອງຮອຍປະຫວັດສາດ, ວັດທະນະທໍາ, ມວນສານກາກບອນປ່າໄມ້ ແລະ ອື່ນໆ ໃນເຂດປ່າປ້ອງກັນ ຊຶ່ງຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ລາຍງານຜົນການສຶກສາຄົ້ນຄວ້າ ຢ່າງເປັນລາຍລັກອັກສອນໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ພາຍໃນກໍານົດເວລາ ຫົກສິບ ວັນ ນັບແຕ່ວັນທີ່ສໍາເລັດການສຶກສາຄົ້ນຄວ້າ ເປັນຕົ້ນໄປ.

**ມາດຕາ 35 ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ**

ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ ແມ່ນ ບ່ອນເກັບກໍາ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນໍາໃຊ້ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ. ສໍາລັບຖານຂໍ້ມູນ ໃຫ້ເຊື່ອມຕໍ່ກັບຖານຂໍ້ມູນ ຂ່າວສານປ່າໄມ້ ຂອງພາກພື້ນ ແລະ ສາກົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນໍາໃຊ້ຂໍ້ມູນ ໃນລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ ຕາມການອະນຸຍາດຂອງຂະແໜງການກະສິກໍາ ແລະ ປ່າໄມ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ໝວດທີ 4
# ການນຳໃຊ້ປ່າປ້ອງກັນ

**ມາດຕາ 36 ການນຳໃຊ້ປ່າປ້ອງກັນ**

ການນຳໃຊ້ປ່າປ້ອງກັນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ນຳໃຊ້ສະເພາະແຕ່ເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ລະບົບນິເວດປ່າໄມ້, ຊີວະນານາພັນ, ຄຸນນະພາບຂອງດິນ ແລະ ສິ່ງແວດລ້ອມ.

ການນຳໃຊ້ປ່າປ້ອງກັນ ແບ່ງອອກເປັນປະເພດ ດັ່ງນີ້:

1. ນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ນຳໃຊ້ເພື່ອຄອບຄົວ;
3. ນຳໃຊ້ຕາມປະເພນີ;
4. ນຳໃຊ້ເພື່ອທຸລະກິດ.

**ມາດຕາ 37 ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ປ່າປ້ອງກັນ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດປ່າໄມ້ ແລະ ຊີວະນານາພັນ, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້, ການທ່ອງທ່ຽວແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາສະຖານທີ່ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ ຊຶ່ງການນຳໃຊ້ນັ້ນ ຕ້ອງສອດຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

ສຳລັບການນຳໃຊ້ໄມ້ ເພື່ອສາທາລະນະປະໂຫຍດ ແມ່ນ ໃຊ້ເພື່ອການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ຂອງບ້ານ ໂດຍໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມກົດໝາຍ ໂດຍສອດຄ່ອງກັບແຜນການຂຸດຄົ້ນໄມ້ປະຈຳປີຂອງ ແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດ ທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 38 ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງໃນປ່າປ້ອງກັນ ເພື່ອຜົນປະໂຫຍດຂອງປະຊາຊົນໃນບ້ານ.

ສຳລັບການນຳໃຊ້ໄມ້ ເພື່ອຜົນປະໂຫຍດຂອງຄອບຄົວ ແມ່ນ ນຳໃຊ້ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈຳເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກໄພພິບັດ ໂດຍໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນຂອງປະຊາຊົນ ສາມາດເກັບກູ້ ແລະ ນຳໃຊ້ໄດ້ ຍົກເວັ້ນເຂດຫວງຫ້າມເດັດຂາດ.

**ມາດຕາ 39 ການນຳໃຊ້ຕາມປະເພນີ**

ການນຳໃຊ້ ຕາມປະເພນີ ແມ່ນ ການຊົມໃຊ້ປ່າປ້ອງກັນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ຕາມທີ່

ເຄີຍປະຕິບັດກັນມາ ແລະ ໃຫ້ໃຊ້ສະເພາະໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

**ມາດຕາ 40 ການນໍາໃຊ້ເພື່ອທຸລະກິດ**

ການນໍາໃຊ້ ເພື່ອທຸລະກິດ ແມ່ນ ການນໍາໃຊ້ປ່າປ້ອງກັນ ເຂົ້າໃນການທ່ອງທ່ຽວທໍາມະຊາດ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້, ບັນດາໂຄງການພັດທະນາພື້ນຖານໂຄງລ່າງ, ຂຸດຄົ້ນແຮ່ທາດ, ການຖ່າຍທໍາຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານ ການນໍາໃຊ້ແບບຍືນຍົງ, ປະຕິບັດລໍາດັບມາດຕະການຫຼຸດຜ່ອນຜົນກະທົບ, ປະຕິບັດຕາມແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

ການນໍາໃຊ້ເຄື່ອງປ່າຂອງດົງໃນປ່າປ້ອງກັນ ເພື່ອເປັນສິນຄ້າ ໃຫ້ດໍາເນີນໃນເຂດປ່າປ້ອງກັນ ໂດຍສອດຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

**ມາດຕາ 41 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າປ້ອງກັນ**

ຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າປ້ອງກັນ ມີສິດ ດັ່ງນີ້:

1. ນໍາໃຊ້ປ່າປ້ອງກັນ ຕາມການອະນຸຍາດ;
2. ໄດ້ຮັບຜົນປະໂຫຍດຈາກການນໍາໃຊ້ ແລະ ດໍາເນີນກິດຈະການໃນປ່າປ້ອງກັນຕາມແຜນຈັດສັນປ່າປ້ອງກັນ, ກົດໝາຍ ແລະ ລະບຽບການ;
3. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າປ້ອງກັນ ມີພັນທະ ດັ່ງນີ້:

1. ນໍາໃຊ້ປ່າປ້ອງກັນໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນຈັດສັນປ່າປ້ອງກັນ, ກົດໝາຍ ແລະ ລະບຽບການ;
2. ຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ປ່າປ້ອງກັນໃຫ້ອຸດົມສົມບູນ ແລະ ຍືນຍົງ;
3. ປົກປັກຮັກສາສິ່ງແວດລ້ອມ, ຍອດນໍ້າ, ແຫຼ່ງນໍ້າ, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ໃນປ່າປ້ອງກັນ;
4. ເປັນເຈົ້າການ, ເຂົ້າຮ່ວມ ຫຼື ປະກອບສ່ວນ ໃນການປ້ອງກັນ ແລະ ສະກັດກັ້ນ ການທໍາລາຍປ່າ, ໄຟໄໝ້ລາມປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ໃນປ່າປ້ອງກັນ;
5. ຮັບຜິດຊອບຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດລໍາດັບມາດຕະການຫຼຸດຜ່ອນຜົນກະທົບ, ເສຍຄ່າທໍານຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ການຮັບຮູ້ສິດນໍາໃຊ້ທີ່ດິນຂອງປະຊາຊົນທີ່ ອາໄສຢູ່ໃນເຂດປ່າປ້ອງກັນ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ປະສານສົມທົບກັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການສໍາຫຼວດ ແລະ ເກັບກໍາຂໍ້ມູນກ່ຽວກັບການນໍາໃຊ້ທີ່ດິນ ຫຼື ສິດນໍາໃຊ້ທີ່ດິນ ຂອງປະຊາຊົນ ທີ່ຕັ້ງພູມລໍາເນົາ ແລະ ອາໄສຢູ່ ກ່ອນການຮັບຮອງເປັນປ່າປ້ອງກັນ ເພື່ອຈັດສັນ, ອອກໃບຢັ້ງຢືນການນໍາໃຊ້ທີ່ດິນ ຫຼື ຂຶ້ນທະບຽນອອກໃບຕາດິນໃຫ້ພວກກ່ຽວ ຕາມກົດໝາຍ.

# ພາກທີ IV
# ການຫັນປ່ຽນ, ການເຊົ່າ ຫຼື ສໍາປະທານ
## ໝວດທີ 1
## ການຫັນປ່ຽນປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

**ມາດຕາ 43 ການຫັນປ່ຽນປ່າປ້ອງກັນ**

ການຫັນປ່ຽນປ່າປ້ອງກັນ ເປັນປ່າຜະລິດ ແມ່ນ ສະພາແຫ່ງຊາດເປັນຜູ້ຮັບຮອງ ຕາມການສະເໜີຂອງລັດຖະບານ. ສໍາລັບການຫັນປ່ຽນປ່າປ້ອງກັນ ເປັນ ປ່າສະຫງວນ ແມ່ນ ລັດຖະບານ ເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກໍາ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການຫັນປ່ຽນປ່າປ້ອງກັນ ລະດັບແຂວງ ເປັນ ປ່າປ້ອງກັນແຫ່ງຊາດ ແມ່ນ ລັດຖະບານເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກໍາ ແລະ ປ່າໄມ້ ໂດຍເປັນເອກະພາບກັບອົງການປົກຄອງ ຂັ້ນແຂວງ ແລະ ການຮັບຮອງຈາກສະພາປະຊາຊົນ ຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ລະດັບເມືອງ ເປັນ ປ່າປ້ອງກັນ ລະດັບແຂວງ ແມ່ນ ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ອະນຸຍາດ ຕາມການສະເໜີຂອງອົງການປົກຄອງ ຂັ້ນແຂວງ ແລະ ການຮັບຮອງຈາກສະພາປະຊາຊົນ ຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ລະດັບບ້ານ ເປັນປ່າປ້ອງກັນ ລະດັບເມືອງ ແມ່ນ ອົງການປົກຄອງ ຂັ້ນແຂວງ ເປັນຜູ້ອະນຸຍາດ ຕາມການສະເໜີຂອງພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ໂດຍເປັນເອກະພາບກັບອົງການປົກຄອງ ຂັ້ນເມືອງ.

**ມາດຕາ 44 ການຫັນປ່ຽນທີ່ດິນປ່າປ້ອງກັນ**

ການຫັນປ່ຽນທີ່ດິນປ່າປ້ອງກັນ ແມ່ນ ການຫັນປ່ຽນທີ່ດິນປ່າປ້ອງກັນ ເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ການຫັນປ່ຽນດັ່ງກ່າວ ຕ້ອງສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຈັດສັນທີ່ດິນແຫ່ງຊາດ, ແຜນການນໍາໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ, ມີຜົນກະທົບໜ້ອຍທີ່ສຸດ ຕໍ່ສິ່ງແວດລ້ອມ ແລະ ຕ້ອງປະຕິບັດລໍາດັບມາດຕະການຫຼຸດຜ່ອນຜົນກະທົບ.

ການຫັນປ່ຽນທີ່ດິນປ່າປ້ອງກັນ ມີ ສອງ ລັກສະນະ ດັ່ງນີ້:

1. ລັກສະນະຖາວອນ ຊຶ່ງເປັນການຫັນປ່ຽນເພື່ອຈຸດປະສົງໃດໜຶ່ງ ທີ່ມີລັກສະນະຍາວນານ ເປັນຕົ້ນ ການສ້າງເຂື່ອນໄຟຟ້າ, ອ່າງເກັບນໍ້າ, ຕີນເສົາສາຍສົ່ງໄຟຟ້າ, ຕີນເສົາເຄື່ອງສົ່ງສັນຍານໂທລະສັບ ຫຼື ການຈັດສັນພູມລໍາເນົາ;
2. ລັກສະນະຊົ່ວຄາວ ຊຶ່ງເປັນການຫັນປ່ຽນເພື່ອດໍາເນີນກິດຈະການໃດໜຶ່ງ ພາຍຫຼັງທີ່ກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ຕ້ອງຫັນປ່ຽນທີ່ດິນດັ່ງກ່າວ ເປັນທີ່ດິນປ່າປ້ອງກັນເໝືອນເດີມ ເປັນຕົ້ນ ເສັ້ນທາງຜ່ານເຂົ້າຫາເຂດກໍ່ສ້າງ, ສະຖານທີ່ປຸກສ້າງຊົ່ວຄາວ.

**ມາດຕາ 45 ອົງການລັດທີ່ມີສິດຕົກລົງກ່ຽວກັບການຫັນປ່ຽນທີ່ດິນປ່າປ້ອງກັນ**

ອົງການລັດທີ່ມີສິດຕົກລົງກ່ຽວກັບການຫັນປ່ຽນທີ່ດິນປ່າປ້ອງກັນ ມີດັ່ງນີ້:

1. ສະພາແຫ່ງຊາດ ຕົກລົງຫັນປ່ຽນປະເພດທີ່ດິນ ປ່າປ້ອງກັນແຫ່ງຊາດ ແລະ ປ່າປ້ອງກັນ ລະດັບແຂວງ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງລັດຖະບານ;

2. ລັດຖະບານ ຕົກລົງຫັນປ່ຽນ ທີ່ດິນປ່າປ້ອງກັນລະດັບເມືອງ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານຄວາມເປັນເອກະພາບຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ;
3. ສະພາປະຊາຊົນ ຂັ້ນແຂວງ ຕົກລົງຫັນປ່ຽນ ທີ່ດິນປ່າປ້ອງກັນລະດັບບ້ານ ຕາມການສະເໜີຂອງອົງການປົກຄອງ ຂັ້ນແຂວງ.

**ມາດຕາ 46 ພັນທະໃນການຫັນປ່ຽນທີ່ດິນປ່າປ້ອງກັນ**

ຜູ້ໄດ້ຮັບອະນຸຍາດໃຫ້ຫັນປ່ຽນທີ່ດິນປ່າປ້ອງກັນ ມີພັນທະ ດັ່ງນີ້:

1. ການຫັນປ່ຽນທີ່ດິນປ່າໄມ້ລັກສະນະຖາວອນ:
- ຈ່າຍຄ່າບໍລິການທາງດ້ານວິຊາການ;
- ຈ່າຍຄ່າທຳນຽມການຫັນປ່ຽນທີ່ດິນປ່າໄມ້ ຍົກເວັ້ນກໍລະນີການຫັນປ່ຽນທີ່ດິນປ່າໄມ້ເປັນອ່າງເກັບນ້ຳ;
- ຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້;
- ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ລວມທັງຄ່າທົດແທນຊີວະນານາພັນ;
- ຈ່າຍຄ່າປູກໄມ້ທົດແທນ.

2. ການຫັນປ່ຽນທີ່ດິນປ່າໄມ້ ລັກສະນະຊົ່ວຄາວ:
- ຈ່າຍຄ່າບໍລິການທາງດ້ານວິຊາການ;
- ຈ່າຍຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້ ສຳລັບການຫັນປ່ຽນທີ່ດິນປ່າໄມ້ໃນເຂດຂຸດຄົ້ນບໍ່ແຮ່ແບບເປີດໜ້າດິນ;
- ຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້;
- ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ລວມທັງຄ່າທົດແທນຊີວະນານາພັນ;
- ຈ່າຍຄ່າປູກໄມ້ທົດແທນ ແລະ ຄ່າປັບໜ້າດິນຄືນ.

ການຄິດໄລ່ຄ່າບໍລິການ ແລະ ຄ່າພັນທະຕ່າງໆ ຂ້າງເທິງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການເຊົ່າ ຫຼື ສຳປະທານທີ່ດິນປ່າປ້ອງກັນ

**ມາດຕາ 47 ການເຊົ່າ ຫຼື ສຳປະທານທີ່ດິນປ່າປ້ອງກັນ**

ການເຊົ່າ ຫຼື ສຳປະທານທີ່ດິນປ່າປ້ອງກັນ ແມ່ນ ການນຳໃຊ້ທີ່ດິນປ່າປ້ອງກັນ ເພື່ອການທ່ອງທ່ຽວທຳມະຊາດ, ການດຳເນີນກິດຈະການລະບົບນິເວດປ່າໄມ້ ແລະ ການດຳເນີນກິດຈະການແຮ່ທາດ.

ການເຊົ່າ ຫຼື ສຳປະທານທີ່ດິນປ່າປ້ອງກັນ ໃຫ້ດຳເນີນໃນເຂດທີ່ລັດຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ເຊັ່ນ ດິນ, ອາກາດ, ຄວາມສູງຈາກລະດັບໜ້ານ້ຳທະເລປານກາງ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ສິດ ນຳໃຊ້ ຫຼື ໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລື ເປັນເອກະພາບກັບປະຊາຊົນທ້ອງຖິ່ນ ແລະ ບັນຫາອື່ນທີ່ຈຳເປັນ;
2. ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

3. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມໂດຍການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;
4. ສ້າງແຜນດໍາເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາແຫຼ່ງນໍ້າ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່ດິນ, ການພັດທະນາບ້ານ, ການສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມໃນການດໍາເນີນການຜະລິດ, ການນໍາໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນເຂດໃຫ້ ເຊົ່າ ຫຼື ສໍາປະທານ ແມ່ນ ເປັນກໍາມະສິດຂອງລັດ ຍົກເວັ້ນໄມ້ປູກ ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

**ມາດຕາ 48 ການເຊົ່າ ຫຼື ສໍາປະທານທີ່ດິນປ່າປ້ອງກັນ ເພື່ອກິດຈະການທ່ອງທ່ຽວທໍາມະຊາດ**

ການເຊົ່າ ຫຼື ສໍາປະທານທີ່ດິນປ່າປ້ອງກັນແຫ່ງຊາດ ເພື່ອກິດຈະການທ່ອງທ່ຽວທໍາມະຊາດ ສາມາດດໍາເນີນໄດ້ ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງກະສິກໍາ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ.

ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າປ້ອງກັນ ລະດັບແຂວງ ແລະ ລະດັບເມືອງ ເພື່ອກິດຈະການທ່ອງທ່ຽວທໍາມະຊາດ ສາມາດດໍາເນີນໄດ້ ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດ ຈາກອົງການປົກຄອງ ຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ໂດຍການເຫັນດີເປັນເອກະພາບກັບພະແນກການ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ.

**ມາດຕາ 49 ການເຊົ່າ ຫຼື ສໍາປະທານທີ່ດິນປ່າປ້ອງກັນ ເພື່ອດໍາເນີນກິດຈະການລະບົບນິເວດປ່າໄມ້**

ການເຊົ່າ ຫຼື ສໍາປະທານທີ່ດິນປ່າປ້ອງກັນ ເພື່ອດໍາເນີນກິດຈະການລະບົບນິເວດປ່າໄມ້ ໃຫ້ດໍາເນີນໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າປ້ອງກັນແຫ່ງຊາດ ເພື່ອດໍາເນີນກິດຈະການລະບົບນິເວດປ່າໄມ້ ສາມາດດໍາເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກກະຊວງກະສິກໍາ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງ ແລະ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ;
2. ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າປ້ອງກັນ ລະດັບແຂວງ ແລະ ລະດັບເມືອງ ເພື່ອດໍາເນີນກິດຈະການລະບົບນິເວດປ່າໄມ້ ສາມາດດໍາເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກອົງການປົກຄອງ ຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກໍາ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບພະແນກການ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ.

**ມາດຕາ 50 ການສໍາປະທານທີ່ດິນ ເພື່ອດໍາເນີນກິດຈະການແຮ່ທາດ**

ສະພາແຫ່ງຊາດ ເປັນຜູ້ຮັບຮອງການສໍາປະທານທີ່ດິນປ່າປ້ອງກັນ ເພື່ອດໍາເນີນໂຄງການບໍ່ແຮ່ຂະໜາດໃຫຍ່ ຕາມການສະເໜີ ຂອງລັດຖະບານ.

ລັດຖະບານ ເປັນຜູ້ຕົກລົງການສໍາປະທານທີ່ດິນປ່າປ້ອງກັນ ເພື່ອດໍາເນີນໂຄງການບໍ່ແຮ່ທົ່ວໄປ.

ສໍາລັບລະບຽບການ ແລະ ກໍານົດໄລຍະເວລາສໍາປະທານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 51 ພັນທະ ຂອງຜູ້ເຊົ່າ ຫຼື ສໍາປະທານ**

ຜູ້ເຊົ່າ ຫຼື ສໍາປະທານ ທີ່ດິນປ່າປ້ອງກັນ ມີພັນທະ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ແຜນຈັດສັນປ່າປ້ອງກັນ;

2. ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເປັນຕົ້ນ ຄ່າການບໍລິການທາງດ້ານວິຊາການ, ຄ່າປັບໜ້າດິນ, ຄ່າປູກຕົ້ນໄມ້, ຄ່າຟື້ນຟູປ່າທົດແທນຄືນ, ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ຄ່າທຳນຽມອື່ນ ຕາມກົດໝາຍ;
3. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການດ້ານລະບົບນິເວດປ່າໄມ້ ເຂົ້າກອງທຶນປົກປັກຮັກສາປ່າໄມ້;
4. ຮັບຜິດຊອບຈ່າຍຄ່າສິ້ນເປືອງ;
5. ຈ່າຍຄ່າທຳນຽມການຫັນປ່ຽນທີ່ດິນປ່າໄມ້ ຍົກເວັ້ນຂຸດຄົ້ນບໍ່ແຮ່ແບບປິດໜ້າດິນ;
6. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ກອງຄຸ້ມຄອງປ່າປ້ອງກັນ

### ມາດຕາ 52 ການຄຸ້ມຄອງ ແລະ ບໍລິຫານ ປ່າປ້ອງກັນ

ປ່າປ້ອງກັນ ແຕ່ລະແຫ່ງ ມີກອງຄຸ້ມຄອງປ່າປ້ອງກັນ ກອງໜຶ່ງຄຸ້ມຄອງ ແລະ ບໍລິຫານ.

ປ່າປ້ອງກັນແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າປ້ອງກັນແຫ່ງຊາດ ທີ່ຢູ່ໃນແຂວງດຽວ ແມ່ນ ອົງການປົກຄອງ ຂັ້ນແຂວງ ນັ້ນ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເສນາທິການ ໂດຍກົງ.

ປ່າປ້ອງກັນ ລະດັບແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ສົມທົບກັບອົງການປົກຄອງ ຂັ້ນເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າປ້ອງກັນ ລະດັບເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າປ້ອງກັນລະດັບບ້ານ ແມ່ນ ອົງການປົກຄອງບ້ານ ເປັນຜູ້ຄຸ້ມຄອງ.

### ມາດຕາ 53 ກອງຄຸ້ມຄອງປ່າປ້ອງກັນ

ກອງຄຸ້ມຄອງປ່າປ້ອງກັນ ມີຫົວໜ້າກອງ ໜຶ່ງທ່ານ, ຮອງຫົວໜ້າ ແລະ ພະນັກງານວິຊາການ ຢ່າງໜ້ອຍຊາວຄົນ ສຳລັບປ່າປ້ອງກັນແຫ່ງຊາດ, ສ່ວນປ່າປ້ອງລະດັບອື່ນ ມີຈຳນວນ ວິຊາການຕາມເງື່ອນໄຂຂອງແຕ່ລະປ່າປ້ອງກັນ ພ້ອມທັງປະກອບເຄື່ອງມື, ອຸປະກອນ, ພາຫະນະ, ອາວຸດ ແລະ ຈັດສັນງົບປະມານຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕາມຄວາມເໝາະສົມ.

ກອງຄຸ້ມຄອງປ່າປ້ອງກັນແຫ່ງຊາດ ມີຖານະເທົ່າກັບ ພະແນກການຂອງກົມ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ. ຫົວໜ້າກອງ ມີຕຳແໜ່ງບໍລິຫານປະເພດ ສີ່ ຂຶ້ນໄປ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນປ່າປ້ອງກັນຕັ້ງຢູ່.

ກອງຄຸ້ມຄອງປ່າປ້ອງກັນ ລະດັບແຂວງ ມີຖານະເທົ່າກັບຂະແໜງປ່າໄມ້ ຂັ້ນແຂວງ. ຫົວໜ້າກອງຄຸ້ມຄອງປ່າປ້ອງກັນ ລະດັບແຂວງ ມີຕຳແໜ່ງບໍລິຫານ ປະເພດ ຫ້າ ຂຶ້ນໄປ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ກອງຄຸ້ມຄອງປ່າປ້ອງກັນ ລະດັບເມືອງ ແລະ ລະດັບບ້ານ ມີຖານະເທົ່າກັບ ໜ່ວຍງານປ່າໄມ້ ຂັ້ນເມືອງ. ຫົວໜ້າກອງຄຸມຄອງປ່າປ້ອງກັນ ລະດັບເມືອງ ແລະ ລະດັບບ້ານ ມີຕຳແໜ່ງບໍລິຫານປະເພດ ຫົກ ຂຶ້ນໄປ,

ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີ ຂອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ

**ມາດຕາ 54 ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ**

ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ;
5. ກອງຄຸ້ມຄອງປ່າປ້ອງກັນ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານປ່າປ້ອງກັນ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານປ່າປ້ອງກັນ ມາເປັນແຜນການ, ແຜນງານ, ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
4. ອອກ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານປ່າປ້ອງກັນ;
5. ສ້າງຕັ້ງກອງຄຸ້ມຄອງປ່າປ້ອງກັນແຫ່ງຊາດ ແລະ ປ່າປ້ອງກັນ ລະດັບແຂວງ;
6. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ໃນຂອບເຂດທົ່ວປະເທດ;
7. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ;
8. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;
9. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີດ້ານການຂະຫຍາຍພັນໄມ້ ແລະ ເຄື່ອງປ່າຂອງດົງ;
10. ສະເໜີລັດຖະບານພິຈາລະນາໃນການນຳໃຊ້, ເຊົ່າ, ສຳປະທານ ແລະ ຫັນປ່ຽນປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ;
11. ສະເໜີລັດຖະບານພິຈາລະນາຮັບຮອງ ຫຼື ຍຸບເລີກການສ້າງຕັ້ງປ່າປ້ອງກັນແຫ່ງຊາດ;
12. ພິຈາລະນາ ຮັບຮອງ ຫຼື ຍົກເລີກປ່າປ້ອງກັນລະດັບແຂວງ;
13. ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ກ່ຽວກັບວຽກງານປ່າປ້ອງກັນ;

14. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າປ້ອງກັນ;
15. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າປ້ອງກັນ;
17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນຕໍ່ລັດຖະບານ ຢ່າງເປັນປົກກະຕິ;
18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
3. ອອກ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານປ່າປ້ອງກັນ;
4. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
5. ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ;
6. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;
7. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີດ້ານການຂະຫຍາຍພັນໄມ້ ແລະ ເຄື່ອງປ່າຂອງດົງ;
8. ສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງ ຫຼື ຍຸບເລີກການສ້າງຕັ້ງປ່າປ້ອງກັນລະດັບແຂວງ;
9. ສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາການເຊົ່າ, ສຳປະທານ ແລະ ຫັນປ່ຽນປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ;
10. ສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຫັນປ່ຽນປ່າປ້ອງກັນ ລະດັບເມືອງ ເປັນປ່າປ້ອງກັນລະດັບແຂວງ;
11. ສ້າງຕັ້ງກອງຄຸ້ມຄອງປ່າປ້ອງກັນ ລະດັບເມືອງ ແລະ ປ່າປ້ອງກັນ ລະດັບບ້ານ;
12. ສະເໜີອົງການປົກຄອງ ຂັ້ນແຂວງ ພິຈາລະນາຮັບຮອງ ຫຼື ຍຸບເລີກປ່າປ້ອງກັນ ລະດັບເມືອງ;
13. ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ກ່ຽວກັບວຽກງານປ່າປ້ອງກັນ;
14. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າປ້ອງກັນ;
15. ປະສານສົມທົບກັບພະແນກການ, ອົງການປົກຄອງ ຂັ້ນເມືອງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານປ່າປ້ອງກັນ ຕາມການມອບໝາຍ;
17. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
2. ໂຄສະນາ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
3. ອອກ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານປ່າປ້ອງກັນ;
4. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
5. ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ;
6. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;
7. ເຂົ້າຮ່ວມໃນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີດ້ານການຂະຫຍາຍພັນໄມ້ ແລະ ເຄື່ອງປ່າຂອງດົງ;
8. ສະເໜີພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພິຈາລະນາການ ເຊົ່າ, ສຳປະທານ ແລະ ຫັນປ່ຽນປ່າປ້ອງກັນ;
9. ສະເໜີພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພິຈາລະນາກ່ຽວກັບການຫັນປ່ຽນປ່າປ້ອງກັນລະດັບບ້ານ ເປັນປ່າປ້ອງກັນ ລະດັບເມືອງ;
10. ສະເໜີອົງການປົກຄອງ ຂັ້ນເມືອງ ພິຈາລະນາຮັບຮອງ ຫຼື ຍຸບເລີກປ່າປ້ອງກັນ ລະດັບບ້ານ;
11. ສະເໜີສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ກ່ຽວກັບວຽກງານປ່າປ້ອງກັນ;
12. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າປ້ອງກັນ;
13. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ຕໍ່ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
3. ເຂົ້າຮ່ວມຕິດຕາມກວດກາ ແລະ ປະເມີນຜົນ ກ່ຽວກັບການດຳເນີນວຽກງານໃນເຂດປ່າປ້ອງກັນ;
4. ເຂົ້າຮ່ວມຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງປ່າປ້ອງກັນແບບຍືນຍົງ;
5. ຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູ ແລະ ພັດທະນາປ່າປ້ອງກັນ ລະດັບບ້ານ ຕາມແຜນຈັດສັນປ່າໄມ້ ຂັ້ນບ້ານ;

6. ຕິດຕາມ, ສະກັດກັ້ນ ແລະ ຕ້ານ ການເຄື່ອນໄຫວທີ່ຜິດກົດໝາຍໃນປ່າປ້ອງກັນ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຢ່າງທັນການ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກອງຄຸ້ມຄອງປ່າປ້ອງກັນ**

ກອງຄຸ້ມຄອງປ່າປ້ອງກັນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າປ້ອງກັນ;
3. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າປ້ອງກັນ;
4. ຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ຂອງບ້ານ;
5. ສຳຫຼວດ, ເກັບກຳຂໍ້ມູນ ແລະ ສ້າງແຜນຈັດສັນປ່າປ້ອງກັນ;
6. ສະເໜີຂະຫຍາຍເນື້ອທີ່, ຍົກລະດັບ, ຂຶ້ນທະບຽນ, ຫັນປ່ຽນ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ;
7. ຕິດຕາມ ແລະ ສຶກສາຄົ້ນຄວ້າ ຊີວະນານາພັນ;
8. ຕິດຕາມ, ສະກັດກັ້ນ ແລະ ຕ້ານ ການເຄື່ອນໄຫວທີ່ຜິດກົດໝາຍໃນເຂດປ່າປ້ອງກັນ ແລ້ວລາຍງານຕໍ່ອົງການຂັ້ນເທິງຂອງຕົນ;
9. ຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າປ້ອງກັນ ໃຫ້ແກ່ພະນັກງານ ແລະ ປະຊາຊົນ;
10. ເຊັນສັນຍາປົກປັກຮັກສາປ່າໄມ້;
11. ປະສານສົມທົບ ກັບອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 ເນື້ອໃນການກວດກາ**

ການກວດກາ ວຽກງານປ່າປ້ອງກັນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບວຽກງານປ່າປ້ອງກັນ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານປ່າປ້ອງກັນ;

ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 61 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ

ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

### ມາດຕາ 62 ເຄື່ອງແບບ

ພະນັກງານ ແລະ ເຈົ້າໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ມີເຄື່ອງແບບ ເພື່ອນຳໃຊ້ເຂົ້າ ໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

### ມາດຕາ 63 ເຄື່ອງໝາຍ ແລະ ຕາປະທັບ

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ວາງອອກ.

## ພາກທີ VIII
## ງົບປະມານນຳໃຊ້ໃນວຽກງານປ່າປ້ອງກັນ

### ມາດຕາ 64 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບທີ່ນຳໃຊ້ເຂົ້າໃນວຽກງານປ່າປ້ອງກັນ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ ທັງພາຍໃນ ແລະ ຕ່າງປະເທດ;
5. ຄ່າຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ;
6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 65 ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານເຂົ້າໃນວຽກງານປ່າປ້ອງກັນຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການນຳໃຊ້ງົບປະມານ ແມ່ນ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ບັນດາກິດຈະການປ່າປ້ອງກັນ.

# ພາກທີ IX
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 66 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ຢ່າງຖືກ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 67 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ X
# ບົດບັນຍັດສຸດທ້າຍ

**ມາດຕາ 68 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 69 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 20 ກຸມພາ 2024 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍປ່າປ້ອງກັນ ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**